## ภาคผนวก ค

## คำพิพากษาของศาลประชาชนสูงสุดของสาธารณรัฐประชาธิปไตยประ ชาชนลาว

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງຈຳປາສັກ

ສານປະຊາຊົນ

ເລກທີ: 45/ອຕ.ພ

ລົງວັນທີ 29/06/2000

**ຄຳຕັດສິນຄະດີແພ່ງ**

ຄະນະສານແພ່ງຂັ້ນຕົ້ນຂອງສານປະຊາຊົນແຂວງຈຳປາສັກ 15125

ຊຶ່ງປະກອບດ້ວຍ:

ທ່ານ ຈະນະຈິນ ຈະນະລັງສີ............ປະທານ

ທ່ານ ທະວີສຸກ ທິລະນຸ................ຄະນະ

ທ່ານ ນາງທອງບາງ ເກດມາລາ.........ຄະນະ

ນັ່ງພ້ອມດ້ວຍ ທ່ານ ນາງມະນີໄຊ ພົງສະຫວັດ..........ຈ່າສານ

ໄດ້ເປີດປະຊຸມສານຂັ້ນໃນວັນທີ 29 ມິຖຸນາ (6) 2000 ເວລາ 8 ໂມງ 30 ນາທີ ຢູ່ຫ້ອງປະຊຸມສານຂອງສານປະຊາຊົນແຂວງຈຳປາສັກ ເພື່ອພິຈາລະນາຄະດີແພ່ງເລກທີ 23/ອຕ.ພ ລົງວັນທີ 23 ພຶດສະພາ (5) 2000

ລະຫວ່າງ

ທ້າວໄຊຊະນະ ອຸດົມຈັນ ຜູ້ຈັດການບໍລິສັດເລື່ອງປັດລົງປາດາອຸດສະຫະກຳທົນຈັກຈຳກັດ ມີສຳນັກງານຕັ້ງຢູ່ຖະໜົນເລກທີ 14 ບ້ານສີເກີດ, ເມືອງນາຊາຍທອງ, ກຳແພງນະຄອນວຽງຈັນ ....................................ໂຈດ

ນາງແສງເພັດ ນິລະແສງ ອາຍຸ 38 ປີ, ສັນຊາດລາວ, ອາຊີບຄ້າຂາຍ, ປັດຈຸບັນຢູ່ບ້ານທ້ວຍຍາງຄຳເໜືອ, ເມືອງປາກເຊ, ແຂວງຈຳປາສັກ..............ຈຳເລີຍ

ກ່ຽວເລື່ອງ : ສັນຍາຊື້-ຂາຍ

**ເນື້ອຄະດີ**

ຕາມຄຳຮ້ອງຟ້ອງສະບັບລົງວັນທີ 12 ມັງກອນ 2000 ຂອງທ້າວໄຊຊະນະ ຜູ້ຈັດການບໍລິສັດເລື່ອງປັດລົງປາດາອຸດສະຫະກຳທົນຈັກ (ໂຈດ) ວ່າ ການທີ່ສານແຂວງຈຳປາສັກໄດ້ຕັດສິນລົງໂທດຕັດອິດສະລະພາບນາງແສງເພັດ (ຈຳເລີຍ) ໃນຂໍ້ຫາອອກເຊັກບໍ່ມີເງິນ (ເຊັກເດັ້ງ) ໃຫ້ແກ່ຕົນນັ້ນ ຕົນວ່າຖືກຕ້ອງແລ້ວ ແຕ່ສານບໍ່ໄດ້ພິຈາລະນາກ່ຽວກັບທາງແພ່ງໃຫ້ຕົນ ດັ່ງນັ້ນ ຕົນຜູ້ຖືກເສຍປະໂຫຍດຈຶ່ງຮ້ອງຟ້ອງທາງແພ່ງເພື່ອທວງເອົາເງິນທີ່ທ້າວອະດິສອນ+ນາງແສງເພັດ ຜົວ-ເມຍ (ຈຳເລີຍ) ໄດ້ຊື້ລົດນຳບໍລິສັດຂອງຕົນ ຊຶ່ງນອກກ່ຽວຍັງຄ້າງຊຳລະເງິນຄ່າລົດຢູ່ຈຳນວນ 7.888,70 ໂດລາສະຫະລັດ ພ້ອມທັງຄ່າເສັຍເປືອງໃນການລົງມາທວງໜີ້ສິນເປັນເງິນຈຳນວນ 10.000.000 ກີບ (ສິບລ້ານກີບ)

ຕາມຄຳແກ້ຟ້ອງສະບັບລົງວັນທີ 22 ພຶດສະພາ 2000 ຂອງນາງແສງເພັດ (ຈຳເລີຍ) ຕົນຮັບຮູ້ທີ່ໜີ້ສິນທີ່ຍັງຄ້າງຊຳລະຊຶ່ງໂຈດໄດ້ຮ້ອງຟ້ອງມານັ້ນ ແຕ່ເນື່ອງຈາກວ່າໃນເວລາທີ່ຕົນຖືກກັກຕົວເພື່ອດຳເນີນຄະດີ ຍ້ອນອອກເຊັກບໍ່ມີເງິນຢູ່ໃນບັນຊີ ເປັນຫຍັງທາງບໍລິສັດ (ໂຈດ) ຈຶ່ງລົງມານຳເອົາລົດລັນພາຍເລກ ວສກ 0451 ແລະລັນພາຍເລກ ວສກ 0452 ຂຶ້ນໄປວຽງຈັນ ໂດຍບໍ່ໄດ້ບອກເລົ່າໃຫ້ຕົນຮູ້ ທັງໆທີ່ລົດສອງຄັນດັ່ງກ່າວແມ່ນມີຄຳສັ່ງອາຍັດຈັບຂອງໂອຍະການແຂວງ

ຈຳປາສັກແລ້ວ ຕາມຄຳສັ່ງເລກທີ 05/ຄຍກ ລົງວັນທີ 24 ກັນຍາ 1998 ມີປະການໜຶ່ງລົດສອງຄັນດັ່ງກ່າວຊື້ຕົນຈາກບໍລິສັດ (ໂຈດ) ນັ້ນ ຕົນກໍໄດ້ຈ່າຍເງິນໃຫ້ໂຈດແລ້ວ ລວມທັງໝົດເປັນເງິນຈຳນວນ 19.010.000 ກີບ ດັ່ງນັ້ນ ຕົນຈຶ່ງຂໍໃຫ້ຜູ້ກ່ຽວນຳເອົາລົດທັງສອງຄັນນັ້ນຄືນມາປາກເຊແລ້ວໄລ່ລຽງບັນຊີຄືນໃໝ່ຕາມຄວາມເໝາະສົມ ສ່ວນການທີ່ຜູ້ກ່ຽວໄດ້ຮ້ອງຟ້ອງເອົາຄ່າສິນເປືອງເປັນເງິນຈຳນວນ 10.000.000 ກີບ ເຫັນວ່າສູງເກີນໄປ ຈຶ່ງບໍ່ສາມາດຊຳລະໃຫ້ບໍລິສັດໂຈດໄດ້.

## ສານ

ໃນນາມສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ໂດຍອີງຕາມໜ້າທີ່ ແລະສິດອຳນາດຂອງສານຕາມກົດໝາຍ ສະບັບເລກທີ 32/ສປສ, ລົງວັນທີ 23 ທັນວາ 1989 ວ່າດ້ວຍສານປະຊາຊົນ ແລະເລກທີ 05/ສປສ, ລົງວັນທີ 30 ທັນວາ 1991 ວ່າດ້ວຍການດັດແປງກົດໝາຍ

## ວິນິດໄສ

ຄະນະສານແຫ່ງຂັ້ນຕົ້ນຂອງສານປະຊາຊົນແຂວງຈຳປາສັກ ໄດ້ຄົ້ນຄວ້າສຳນວນຄະດີແຫ່ງເລື່ອງນີ້ ພ້ອມທັງໄດ້ພິຈາລະນາຕົ້ນຂອງການໂຕ້ສວນໃນທີ່ປະຊຸມສານແລ້ວ ຈຶ່ງໄດ້ລົງຄວາມເຫັນດັ່ງນີ້:

ເຫັນວ່າ ໃນເບື້ອງຕົ້ນທ້າວອະດີສອນ ຫຼືຫີ ຜູ້ເປັນຜົວຂອງນາງແສງເພັດ (ຈຳເລີຍ) ໄດ້ຊື້ລົດກະບະລານຈຽນນຳນຶ່ງຄັນນຳບໍລິສັດເລື່ອງປັດສິ່ງປາກາອຸດສະຫະກຳກົນຈັກຈຳກັດ ຊຶ່ງມີສຳນັກງານຕັ້ງຢູ່ທາກີໂລແມັດທີ 14, ບ້ານສີເກີດ, ເມືອງນາຊາຍທອງ, ກຳແພງນະຄອນວຽງຈັນ ໂດຍແມ່ນທ້າວໄຊຊະນະ ອຸດົມຊັບ ເປັນຜູ້ຈັດການບໍລິສັດ (ໂຈດ) ຊຶ່ງການຊື້ນີ້ ແມ່ນຊື້ໃນຮູບການເງິນຜ່ອນ, ເປັນລົດກະບະຊວງຍາວ 2 ປະຕູ, ສີຂາວ ຊູມ ແອລຈີຊີ 1041 ເລກຄີ ເລກຈັກ 950802536 ເລກຖັງ 960 100891 ໃນລາຄາ 14.200 ໂດລາສະຫະລັດ. ໃນນັ້ນ ທ້າວອະດີສອນສັນຍາວ່າຈະຊຳລະເງິນຄ່າລົດໃຫ້ເປັນແຕ່ລະເດືອນ, ເດືອນລະ 2.367 ໂດລາ ແລະຊຳລະໃຫ້ໝົດກ່ອນໃນວັນທີ 18 ສິງຫາ 1997 ຕາມສັນຍາຈ່າຍເງິນຜ່ອນສະບັບລົງວັນທີ 17 ກຸມພາ 1997 ເມື່ອຜູ້ກ່ຽວຊື້ແລ້ວກໍໄດ້ເລີ່ມປະຕິບັດສັນຍາ ຄືໄດ້ນຳເງິນມາຊຳລະໃຫ້ແກ່ໂຈດສອງຄັ້ງ, ຄັ້ງທີໜຶ່ງຊຳລະໃຫ້ຈຳນວນ 5.000.000 ກີບ ເທົ່າກັບເງິນໂດລາ 4.587 ໂດລາ ຕາມໃບຮັບເງິນສະບັບລົງວັນທີ 7 ເມສາ 1997 ແລະຄັ້ງສຸດທ້າຍ ໄດ້ຊຳລະໃຫ້ຈຳນວນ 2.000.000 ກີບ ເທົ່າກັບເງິນໂດລາ 1.724,13 ໂດລາຕາມໃບຮັບເງິນສະບັບລົງວັນທີ 9 ມິຖຸນາ 1997 ຈາກນັ້ນມາຜູ້ກ່ຽວກໍບໍ່ໄດ້ນຳເງິນມາຊຳລະໃຫ້ໂຈດອີກ. ຕໍ່ມານາງແສງເພັດຜູ້ເປັນເມຍຂອງທ້າວອະດີສອນ ໄດ້ຂຽນເຊັກໃຫ້ແກ່ໂຈດ ໂດຍໃຫ້ໄປຖອນເອົາຢູ່ທະນາຄານການຄ້າຕ່າງປະເທດລາວ ສາຂາແຂວງຈຳປາສັກ ເຊັກດັ່ງກ່າວມີໝາຍເລກບັນຊີ 00.452 8005.00113 ລົງວັນທີ 2 ສິງຫາ 1997 ມີເງິນຈຳນວນ 7.888,70 ໂດລາ ເມື່ອນາງແສງເພັດອອກເຊັກແລ້ວ ຜູ້ກ່ຽວກໍໄດ້ຂໍປ່ຽນທະບຽນລົດຄັນດັ່ງກ່າວ ພ້ອມວ່າທະບຽນລົດຄັນນີ້ແມ່ນຍັງອອກຊື່ບໍລິສັດຂອງໂຈດ. ເມື່ອປ່ຽນທະບຽນລົດສຳເລັດແລ້ວ ກໍໄດ້ຂາຍລົດຄັນນີ້ໃຫ້ແກ່ຜູ້ອື່ນ ໂດຍທີ່ຜູ້ກ່ຽວຍັງຄ້າງຊຳລະເງິນຄ່າລົດຄັນນີ້ຢູ່ຈຳນວນ 7.888,70 ໂດລາ ຕໍ່ມາໂຈດໄດ້ນຳເອົາເຊັກທີ່ນາງແສງເພັດອອກໃຫ້ນັ້ນ ໄປຖອນຢູ່ທະນາຄານຈຶ່ງຮູ້ວ່າ ເຊັກດັ່ງກ່າວບໍ່ມີເງິນຢູ່ໃນບັນຊີ (ເຊັກເປົ່າ) ຊຶ່ງກ່ຽວກັບບັນຫານີ້ສານປະຊາຊົນແຂວງຈຳປາສັກ ກໍໄດ້ຕັດສິນລົງໂທດທາງອາຍາສະເພາະຜູ້ກ່ຽວແລ້ວ ຕາມຄຳຕັດສິນຄະດີ

ອາຍາເລກທີ 33/ອຕ.ອ ລົງວັນທີ 18 ມິຖຸນາ 1999 ແຕ່ຫາກບໍ່ໄດ້ພິຈາລະນາຄ່າເສຍຫາຍທາງແພ່ງໃຫ້ ດັ່ງນັ້ນ ທ້າວໄຊຊະນະ (ໂຈດ) ຈຶ່ງໄດ້ຮ້ອງຟ້ອງເພື່ອທວງໃຫ້ນາງແສງເພັດແລະທ້າວອະກິສອນ (ຈຳເລີຍ) ຊຳລະເງິນຄ່າລົດໃນສ່ວນທີ່ຍັງເຫຼືອຈຳນວນ 7.888,70 ໂດລາ, ສ່ວນຄ່າສິນເປືອງຈຳນວນ 10.000.000 ກີບ ຕາມຄຳຮ້ອງຟ້ອງນັ້ນ ມາຮອດປັດຈຸບັນນັ້ນແມ່ນໄດ້ຖອນຟ້ອງແລ້ວ ຄືບໍ່ຂໍເອົາເງິນສ່ວນນີ້ນຳຈຳເລີຍ ຕາມຈົດໝາຍບັນທຶກຄຳໃຫ້ການສະບັບລົງວັນທີ 19 ມິຖຸນາ 2000 ຂອງທ້າວລິນສະຫວັດ ຊຶ່ງເອົາມາໃຫ້ການຕໍ່ສານໃນນາມເປັນຜູ້ສູ້ລະດີຕາງທ້າວໄຊຊະນະ (ໂຈດ) ຕາມໃບມອບສິດສະບັບເລກທີ 227/ລປ ລົງວັນທີ 15 ມິຖຸນາ 2000. ສ່ວນນາງແສງເພັດ (ຈຳເລີຍ) ແມ່ນຮັບຮູ້ຕົນສິນທີ່ຍັງຄ້າງຊຳລະຕາມທີ່ໂຈດໄດ້ຮ້ອງຟ້ອງມານັ້ນ ຕາມຄຳແກ້ຟ້ອງສະບັບລົງວັນທີ 22 ພຶດສະພາ 2000, ແຕ່ຜູ້ກ່ຽວພັດຍັງຟ້ອງແຍ້ງຄືນ ໂດຍອ້າງວ່າ ນອກຈາກລົດລາພຈຽນ 01 ຄັນ ສີຂາວຕາມທີ່ໂຈດໄດ້ຮ້ອງຟ້ອງມານັ້ນແລ້ວ ໃນເວລາຕໍ່ມາທ້າວອະກິສອນ ຜູ້ເປັນຜົວຂອງຜູ້ກ່ຽວຍັງໄດ້ຊື້ລົດລາພຈຽນນຳບໍລິສັດຂອງໂຈດອີກ 02 ຄັນ ເປັນສີຟ້າທັງສອງຄັນ ໃນລາຄາ 27.000 ໂດລາ ໃນນັ້ນ ຜູ້ກ່ຽວອ້າງວ່າ ໄດ້ຊຳລະເງິນໃຫ້ໂຈດແລ້ວ 19.010.000 ກີບ ຊຶ່ງເງິນທີ່ໄດ້ຊຳລະໄປນັ້ນ ເຫັນວ່າກາຍລາຄາລົດໜຶ່ງຄັນ ດັ່ງນັ້ນ ຜູ້ກ່ຽວຈຶ່ງເອົາລົດນຳໂຈດຄືນຕາມເງິນທີ່ໄດ້ຈ່າຍໄປ ຊຶ່ງປັດຈຸບັນລົດທັງສອງຄັນທີ່ວ່ານີ້ໂຈດໄດ້ມາຢຶດເອົາຄືນເມືອແລ້ວ ຕາມຈົດໝາຍບັນທຶກຄຳໃຫ້ການຂອງນາງແສງເພັດ (ຈຳເລີຍ) ສະບັບລົງວັນທີ 7 ມິຖຸນາ 2000 ກ່ຽວກັບການຟ້ອງແຍ້ງຂອງໂຈດນີ້ ທ້າວລິນສະຫວັດຜູ້ຕາງໜ້າໂຈດ ໄດ້ອ້າງວ່າ ນອກຈາກລົດລາພຈຽນສີຂາວ 01 ຄັນ ທີ່ບໍລິສັດຜູ້ກ່ຽວຮ້ອງຟ້ອງແລ້ວ ໃນລະຍະເວລາຕໍ່ມາທ້າວອະກິສອນຜົວຂອງນາງແສງເພັດ ຍັງໄດ້ໄປຂໍຄາວລົດ (ຊື້ຜ່ອນ) ນຳບໍລິສັດຂອງຜູ້ກ່ຽວອີກເປັນຄັ້ງທີສອງຈຳນວນສອງຄັນແທ້, ຍີ່ຫໍ້ລາພຈຽນສີຟ້າໝົດທັງສອງຄັນ ໃນລາຄາຄັນລະ 14.500 ໂດລາ × 02 ຄັນ ເທົ່າກັບ 29.000 ໂດລາ ໃນນັ້ນ ທ້າວອະກິສອນ ໄດ້ຊຳລະເງິນລ່ວງໜ້າໃຫ້ໂຈດແລ້ວ ຈຳນວນ 10.000 ໂດລາ ຍັງຄ້າງຊຳລະຢູ່ 19.000 ໂດລາ ໃນຈຳນວນເງິນທີ່ຍັງຄ້າງນີ້ ຜູ້ກ່ຽວໄດ້ຂໍຊຳລະເປັນແຕ່ລະເດືອນ ເດືອນລະ 3.167 ໂດລາ ແລະຈະຊຳລະໃຫ້ໝົດກ່ອນໃນວັນທີ 24 ທັນວາ 1997 ຕາມສັນຍາຈ່າຍເງິນຜ່ອນສະບັບເລກທີ 171/ຢລ ລົງວັນທີ 24 ມິຖຸນາ 1997 ເມື່ອຜູ້ກ່ຽວຊື້ແລ້ວກໍໄດ້ເລີ່ມປະຕິບັດສັນຍາ ໂດຍໄດ້ນຳເງິນມາຊຳລະໃຫ້ແກ່ໂຈດຕື່ມອີກຈຳນວນ 04 ຄັ້ງຄື: ຄັ້ງທີ 1 ໄດ້ຊຳລະຈຳນວນ 4.000.000 ກີບ ຕົກເປັນເງິນໂດລາ 2.500 ໂດລາ ຕາມໃບຮັບເງິນສະບັບລົງວັນທີ 18 ກັນຍາ 1997, ຄັ້ງທີສອງ ໄດ້ຊຳລະເງິນຈຳນວນ 30.000 ບາດ ເທົ່າກັບເງິນໂດລາ 654 ໂດລາ ຕາມໃບຮັບເງິນສະບັບລົງວັນທີ 23 ທັນວາ 1997, ຄັ້ງທີສາມ ໄດ້ຊຳລະເງິນຈຳນວນ 2.000.000 ກີບ ເທົ່າກັບເງິນໂດລາ 806,45 ໂດລາ ຕາມໃບຮັບເງິນສະບັບລົງວັນທີ 23 ກຸມພາ 1998 ແລະຄັ້ງທີສີ່ໄດ້ຊຳລະເງິນຈຳນວນ 3.000.000 ກີບ ເທົ່າກັບເງິນໂດລາ 1.230,51 ໂດລາ ຕາມໃບຮັບເງິນສະບັບລົງວັນທີ 13 ມີນາ 1998 ເມື່ອລວມຈຳນວນເງິນທັງໝົດທີ່ທ້າວອະກິສອນໄດ້ຊຳລະໃຫ້ຄ່າລົດທີ່ຊື້ໃນງວດສຸດທ້າຍຈຳນວນ 02 ຄັນນີ້ ເຫັນວ່າຜູ້ກ່ຽວໄດ້ຊຳລະໃຫ້ແລ້ວຈຳນວນ 15.190,,96 ໂດລາ ແຕ່ເນື່ອງຈາກວ່າຜູ້ກ່ຽວບໍ່ສາມາດຊຳລະເງິນໃຫ້ໃນສ່ວນທີ່ຍັງເຫຼືອຈຳນວນ 13.809,04 ໂດລາ ໃຫ້ບໍລິສັດຕາມກຳນົດເວລາ ທີ່ໄດ້ລະບຸໄວ້ໃນສັນຍາ ດັ່ງນັ້ນ ບໍລິສັດ(ໂຈດ) ຈຶ່ງໄດ້ຢຶດເອົາລົດທັງສອງຄັນທີ່ຊື້ໃນງວດສຸດທ້າຍນັ້ນເມືອວຽງຈັນ

ຈ່າສານ

ຄືນ ສ່ວນເງິນທີ່ຜູ້ກ່ຽວໄດ້ຈ່າຍໄປກ່ອນແລ້ວຈຳນວນ 15.190,96 ໂດລານັ້ນ ກໍຖືວ່າເປັນຄ່າເຊົ່າລົດ ແລະຄ່າຫຼຸຍຫ້ຽນ ຈຶ່ງບໍລິສັດໂຈດອ້າງວ່າ ກ່ຽວກັບລົດທັງສອງຄັນນີ້ ຜູ້ກ່ຽວບໍ່ໄດ້ຮ້ອງຟ້ອງເນື່ອງຈາກວ່າ ຜູ້ກ່ຽວໄດ້ລົດທັງສອງຄັນນັ້ນຄືນເມື່ອແລ້ວ, ຕາມຈົດໝາຍບັນທຶກຄຳໃຫ້ການສະບັບລົງວັນທີ 19 ມິຖຸນາ 2000 ຂອງທ້າວອົ້ມສະຫວັດຜູ້ຕາງໜ້າຂອງທ້າວໄຊຊະນະ (ໂຈດ)

ເຫັນວ່າ ການທີ່ທ້າວໄຊຊະນະ (ໂຈດ) ໄດ້ຮ້ອງຟ້ອງເພື່ອທວງເອົາເງິນຈຳນວນ 7.888,70 ໂດລາສະຫະລັດຈາກທ້າວອະກິສອນ ແລະນາງແສງເພັດ (ຈຳເລີຍ) ໂດຍອ້າງວ່າເປັນເງິນທີ່ຈຳເລີຍຍັງຄ້າງຊຳລະຄ່າຊື້-ຂາຍລົດຄານຈຽນນັ້ນ ເມື່ອສານພິຈາລະນາແລ້ວເຫັນວ່າມີເຫດຜົນ ເນື່ອງຈາກວ່າອີງຕາມໃບສັນຍາຈ່າຍເງິນຜ່ອນ (ໃຊ້ແທນໃບຊື້-ຂາຍ) ສະບັບລົງວັນທີ 17 ກຸມພາ 1997 ກໍເຫັນວ່າຜູ້ກ່ຽວໄດ້ຊື້ລົດຄານຈຽນນຳໂຈດແທ້ ໃນລາຄາ 14.200 ໂດລາ ແລະອີງຕາມໃບຮັບເງິນສະບັບລົງວັນທີ 7 ພຶດສະພາ 1997 ແລະສະບັບລົງວັນທີ 9 ມິຖຸນາ 1997 ແລ້ວເຫັນວ່າຈຳເລີຍໄດ້ຊຳລະເງິນໃຫ້ແກ່ໂຈດພຽງແຕ່ 6.311,13 ໂດລາເທົ່ານັ້ນ ອີກປະການໜຶ່ງກ່ຽວກັບບັນຫານີ້ ນາງແສງເພັດ (ຈຳເລີຍ) ກໍຮັບຮູ້ເຫັນດີຕາມທີ່ໂຈດໄດ້ຮ້ອງຟ້ອງ ຕາມຄຳແກ້ຟ້ອງຂອງຜູ້ກ່ຽວສະບັບລົງວັນທີ 22 ພຶດສະພາ 2000 ດັ່ງນັ້ນ, ສານຈຶ່ງເຫັນຄວນໃຫ້ຈຳເລີຍໃຊ້ແທນເງິນໃນສ່ວນທີ່ຜູ້ກ່ຽວຍັງຄ້າງຊຳລະຈຳນວນ 7.888,70 ໂດລາຄືນໃຫ້ແກ່ທ້າວໄຊຊະນະ ຜູ້ຈັດການບໍລິສັດເລືອງຟັດລົງປາດາອຸດສະຫະກຳກົນຈັກ (ໂຈດ).

ເຫັນວ່າການທີ່ນາງແສງເພັດ (ຈຳເລີຍ) ໄດ້ຟ້ອງແຍ້ງໂຈດຄືນ ໂດຍອ້າງວ່າ ກ່ຽວກັບລົດຄານຈຽນ 02 ຄັນ ສີຟ້າໝົດທັງສອງ ຊຶ່ງໄດ້ຊື້ໃນງວດສຸດທ້າຍ ໃນລາຄາ 27.000 ໂດລາ ໃນນັ້ນຜູ້ກ່ຽວອ້າງວ່າ ໄດ້ຊຳລະເງິນໃຫ້ໂຈດແລ້ວ 19.010.000 ກີບ ຊຶ່ງເຫັນວ່ານັ້ນເກີນກັບລາຄາລົດຄັນໜຶ່ງ ແຕ່ປັດຈຸບັນນີ້ໂຈດໄດ້ມາຍຶດເອົາລົດທັງສອງຄັນນຳຜູ້ກ່ຽວຂຶ້ນເມືອງວຽງຈັນຄືນແລ້ວ ດັ່ງນັ້ນ ນາງແສງເພັດຈຶ່ງສະເໜີໄລ່ລຽງບັນຊີກັບໂຈດຄືນໃໝ່ ຖ້າຫາກວ່າເງິນທີ່ຜູ້ກ່ຽວ ໄດ້ຊຳລະໄປແລ້ວນັ້ນ ມັນຫາກກາຍກັບລາຄາລົດໜຶ່ງຄັນແທ້ ຜູ້ກ່ຽວກໍຂໍເອົາລົດນຳໂຈດຄືນ ເຊິ່ງກ່ຽວກັບການຟ້ອງແຍ້ງຂອງຈຳເລີຍນີ້ ເມື່ອສານໄດ້ພິຈາລະນາແລ້ວເຫັນວ່າ ທ້າວອະກິສອນຜົວຂອງນາງແສງເພັດໄດ້ຊື້ລົດຄານຈຽນໄດ້ຊື້ລົດຈາກບໍລິສັດຂອງໂຈດເພີ່ມອີກຈຳນວນສອງຄັນແທ້ ເປັນສີຟ້າທັງສອງ ໃນລາຄາຄັນລະ 14.500 ໂດລາ × 02 ຄັນ = 29.000 ໂດລາ ໃນນັ້ນ ຜູ້ຊື້ໄດ້ຈ່າຍເງິນລ່ວງໜ້າໃຫ້ແລ້ວ 10.000 ໂດລາ ຍັງຄ້າງ 19.000 ໂດລາ ຕາມສັນຍາຈ່າຍເງິນຜ່ອນສະບັບເລກທີ 171/ປດ ລົງວັນທີ 24 ມິຖຸນາ 1997 ຕໍ່ມາທ້າວອະກິສອນ (ຜູ້ຊື້) ໄດ້ມາຊຳລະເງິນໃຫ້ອີກ 04 ຄັ້ງ ເປັນເງິນ 5.190,96 ໂດລາ ຕາມໃບຮັບເງິນສະບັບລົງວັນທີ 18 ກັນຍາ 1997, ສະບັບລົງວັນທີ 23 ທັນວາ 1997, ສະບັບລົງວັນທີ 23 ກຸມພາ 1998 ແລະສະບັບລົງວັນທີ 13 ມີນາ 1998 ເມື່ອລວມຈຳນວນເງິນທີ່ທ້າວອະກິສອນໄດ້ຊຳລະໃຫ້ແກ່ໂຈດໃນການຊື້ລົດໃນງວດທີສອງ (ຈຳນວນ 02 ຄັນ) ນີ້ເຫັນວ່າ ແກເປັນເງິນ 15.190,96 ໂດລາ ຊຶ່ງກ່ຽວກັບບັນຫານີ້ ທ້າວອົ້ມສະຫວັດຜູ້ຕາງໜ້າທ້າວໄຊຊະນະ (ໂຈດ) ກໍຮັບຮູ້ວ່າເປັນຄວາມຈິງຄືໄດ້ອີງໃສ່ນັ້ນແທ້ ຕາມຈົດໝາຍບັນທຶກຄຳໃຫ້ການຂອງຜູ້ກ່ຽວສະບັບລົງວັນທີ 19 ມິຖຸນາ 2000 ສະນັ້ນ ສານຈຶ່ງເຫັນວ່າການຟ້ອງແຍ້ງຂອງນາງແສງເພັດ (ຈຳເລີຍ) ແມ່ນມີເຫດຜົນ ເນື່ອງຈາກວ່າອີງຕາມໃບສັນຍາຈ່າຍເງິນຜ່ອນສະບັບເລກທີ 171/ປດ ລົງວັນທີ 24 ມິຖຸນາ 1997 ນັ້ນ ລົດຄັນໜຶ່ງກໍມີລາຄາພຽງແຕ່ 14.500 ໂດລາ ດັ່ງນັ້ນ ການທີ່ນາງແສງເພັດໄດ້ຈ່າຍເງິນໃຫ້ແກ່ທ້າວໄຊຊະນະດັ່ງກ່າວ ຈຶ່ງເຫັນວ່ານັ້ນເກີນກັບລາຄາລົດໜຶ່ງຄັນ ໝາຍຄວາມວ່າ ນາງແສງເພັດ ໄດ້ຈ່າຍເກີນເປັນເງິນຈຳນວນ

690,96 ໂດລາ ແລະເຖິງວ່າການທີ່ນາງແສງເພັດ ໄດ້ຊຳລະເງິນໃຫ້ແກ່ທ້າວໄຊຊະນະໃນສອງຄັ້ງ ສຸດທ້າຍຄື ຈ່າຍຄັ້ງວັນທີ 23 ກຸມພາ 1998 ແລະຈ່າຍຄັ້ງວັນທີ 13 ມີນາ 1998 ນັ້ນ ມັນຈະເປັນການຊຳລະໃຫ້ທັນຕາມກຳນົດເວລາຄື ໝາຍວ່າອີງຕາມສັນຍາຈ່າຍເງິນຜ່ອນສະບັບລົງວັນທີ 24 ມິຖຸນາ 1997 ນັ້ນ ໄດ້ລະບຸເນື້ອໃນສັນຍາໄວ້ວ່າ ຝ່າຍຜູ້ຊື້ຄື ທ້າວອະກິສອນ ແລະນາງແສງເພັດ ຈະຕ້ອງຊຳລະເງິນຄ່າລົດໃຫ້ໝົດກ່ອນວັນທີ 24 ທັນວາ 1997 ແຕ່ໃນນີ້ນາງແສງເພັດພັດມາຊຳລະໃຫ້ທ້າວໄຊຊະນະ ໃນວັນທີ 23 ກຸມພາ 1998 ແລະວັນທີ 13 ມີນາ 1998 ກໍຕາມ ແຕ່ທ້າວໄຊຊະນະກໍຍັງຮັບເອົາ ຈາກເຫດຜົນດັ່ງກ່າວ ສານຈຶ່ງເຫັນຄວນໃຫ້ນາງແສງເພັດ (ຈຳເລີຍ) ມີກຳມະສິດກ່ຽວກັບລົດທີ່ຕົກແຍ່ງກັນນັ້ນໝົດສິ້ນ / ແຕ່ເນື່ອງຈາກວ່າລົດທັງສອງຄັນດັ່ງກ່າວນັ້ນ ທ້າວໄຊຊະນະ(ໂຈດ) ໄດ້ນຳມາເອົາຈາກຈຳເລີຍແລ້ວເອົາອັນເນື່ອງຈາກຈັບຍຶດແລ້ວ ດັ່ງນັ້ນ ຈຶ່ງເຫັນຄວນໃຫ້ໂຈດນຳເອົາລົດຄັນນັ້ນລົງມາມອບໃຫ້ແກ່ຈຳເລີຍ ໂດຍໃຫ້ເອົາລົດໝາຍເລກທະບຽນ ວສທ 0451 ເລກຈັກ 01740 ເລກຖັງ 970201010 ຕາມໃບສະເໜີຂອງນາງແສງເພັດ (ຈຳເລີຍ) ສະບັບລົງວັນທີ 25 ມິຖຸນາ 2000 ສ່ວນລົດອີກໜຶ່ງຄັນຄືໝາຍເລກທະບຽນ ວສທ 0452 ເລກຈັກ 01410 ເລກຖັງ 97020-1006 ຍີ່ຫໍ້ລານຈູນ, ກະບະຊ່ວງຍາວສອງປະຕູ, ສີຟ້າ ຈຶ່ງຍັງຢູ່ນຳໂຈດນັ້ນກໍໃຫ້ແລ້ວໄປ ແລະຖືວ່າເງິນທີ່ຈຳເລີຍໄດ້ຈ່າຍເງິນຈຳນວນ 690,96 ໂດລາ ໃຫ້ແກ່ໂຈດນັ້ນເປັນການເໝາະສົມແລ້ວກັບຄ່າຫຼຸ້ຍຫ້ຽນຂອງລົດຄັນດັ່ງກ່າວ (ຄັນທີ່ຍັງຢູ່ນຳໂຈດ) ຈຶ່ງໃນຄວາມເປັນຈິງແລ້ວນາງແສງເພັດ (ຈຳເລີຍ) ກໍໄດ້ນຳໃຊ້ລົດຄັນນີ້ໃນໄລຍະຜ່ານມາແທ້. *

ເຫັນວ່າ ກ່ຽວກັບໜີ້ສິນດັ່ງກ່າວນີ້ ສານຖືວ່າເປັນໜີ້ຕ້ອງສົ່ງ ແລະໜີ້ຕ້ອງຮັບ ຂອງທ້າວອະກິສອນ ແລະນາງແສງເພັດ ຈຶ່ງແມ່ນກ່ຽວໄດ້ສ້າງຂຶ້ນໃນເວລາຍັງເປັນຜົວເມຍກັນ ແຕ່ກໍເຫັນວ່າປັດຈຸບັນນີ້ພວກກ່ຽວໄດ້ຢ່າຮ້າງກັນແລ້ວຕາມໃບຢ່າຮ້າງດ້ວຍຄວາມສະໝັກໃຈຂອງທັງສອງຝ່າຍ ສະບັບລົງວັນທີ 20 ກຸມພາ 2000 ອີກປະການໜຶ່ງຕາມຈົດໝາຍບັນທຶກຄຳໃຫ້ການຂອງນາງແສງເພັດ ສະບັບລົງວັນທີ 7 ມິຖຸນາ 2000 ຈຶ່ງໄດ້ໃຫ້ການວ່າ ສຳລັບເຫດເລື່ອງນີ້ ເຖິງວ່າຜູ້ກ່ຽວຈະເປັນຝ່າຍເສຍ ຫຼືຊະນະຄະດີ ຜູ້ກ່ຽວກໍຈະເປັນຜູ້ຮັບຜິດຊອບແຕ່ພຽງຜູ້ດຽວ ໂດຍບໍ່ໃຫ້ທ້າວອະກິສອນມີສ່ວນກ່ຽວຂ້ອງນຳແຕ່ຢ່າງໃດ ຈຶ່ງກ່ຽວກັບບັນຫາທ້າວອະກິສອນເອງກໍເຫັນດີເປັນເອກະພາບກັບນາງແສງເພັດທຸກປະການ ຕາມຈົດໝາຍບັນທຶກຄຳໃຫ້ການຂອງຜູ້ກ່ຽວສະບັບລົງວັນທີ 20 ມິຖຸນາ 2000 ຈາກການຕົກລົງເປັນເອກະພາບກັນດັ່ງກ່າວນີ້ ສານຈຶ່ງເຫັນຄວນໃຫ້ນາງແສງເພັດເປັນຜູ້ຮັບຜິດຊອບ (ໃຊ້ແທນ ແລະໄດ້ຮັບ) ທັງໝົດແຕ່ພຽງຜູ້ດຽວ ຕໍ່ໜີ້ຕ້ອງສົ່ງ ແລະໜີ້ຕ້ອງຮັບສຳລັບເຫດເລື່ອງນີ້ ຕາມທີ່ໄດ້ວິພາກໃສ່ມາຂ້າງເທິງນີ້.

ເຫັນວ່າ ຈາກເຫດຜົນດັ່ງກ່າວ ສານຈຶ່ງເຫັນຄວນ ໃຫ້ນາງແສງເພັດ (ຈຳເລີຍ) ເສຍອາກອນຂອງລັດ ຕາມການຄິດໄລ່ດັ່ງນີ້ 7.888,70 ໂດລາ × 7.750 ກີບ = 61.137.425 ກີບ × 2% = 1.222.748 ກີບ ແຕ່ເນື່ອງຈາກວ່າພົນຂອງການຄຳໄດ້ກ່ຽວກັບ ຄ່າອາກອນສຳລັບຄະດີເລື່ອງນີ້ນັ້ນສູງກວ່າກົດໝາຍໄດ້ກຳນົດໄວ້ ດັ່ງນັ້ນ ຈຶ່ງເຫັນຄວນໃຫ້ນາງແສງເພັດເສຍອາກອນຂອງລັດ

// ໖ //

ຈຳນວນ 100.000 ກີບ (ໜຶ່ງຮ້ອຍພັນກີບ) ພ້ອມກັນນັ້ນກໍເຫັນຄວນໃຫ້ໂຈດ ເສຍຄ່າອາກອນຂອງລັດຈຳນວນ 100.000 ກີບ (ໜຶ່ງຮ້ອຍພັນກີບ). ໃນເລື່ອງທີ່ນາງແສງເພັດ (ຈຳເລີຍ)ຟ້ອງແຍ່ງມີເຫດຜົນ ສ່ວນເງິນຈຳນວນ 5.000 ກີບ ທີ່ໂຈດໄດ້ນຳມາວາງສານນັ້ນ ຜ່ານການດຳເນີນຄະດີສານໄດ້ໃຊ້ຈ່າຍໝົດແລ້ວ ດັ່ງນັ້ນ ຈຶ່ງເຫັນຄວນໃຫ້ຈຳເລີຍທົດແທນຄືນໃຫ້ແກ່ໂຈດຈຳນວນ 2.500 ກີບ ພ້ອມກັນນັ້ນກໍເຫັນຄວນໃຫ້ໂຈດ ແລະຈຳເລີຍຮັບຜິດຊອບເສຍຄ່າສິ້ນເປືອງເອກະສານຕາມການຄິດໄລ່ຂອງຈ່າສານຕັ້ງວັນທີ 28 ມິຖຸນາ 2000 ຜູ້ລະເຄິ່ງຈຳນວນ 8.000 ກີບ ຖືກຜູ້ລະ 4.000 ກີບ ພ້ອມທັງເຫັນຄວນໃຫ້ພວກເຂົາຮັບຜິດຊອບເສຍຄ່າສິ້ນເປືອງຕ່າງໆໃນເວລາປະຕິບັດຄຳຕັດສິນຂອງສານຕາມການໃຊ້ຈ່າຍຕົວຈິງໃນຕໍ່ໜ້າຜູ້ລະເຄິ່ງເຊິ່ງກັນ.

ເຫັນວ່າ ໃນທີ່ປະຊຸມສານວັນນີ້ ທັງໂຈດ ແລະຈຳເລີຍບໍ່ໄດ້ເຂົ້າມາຮ່ວມ ແຕ່ເນື່ອງຈາກວ່າຂໍ້ມູນຫຼັກຖານທີ່ມີຢູ່ໃນສຳນວນຄະດີນີ້ແມ່ນແຈ້ງຂາວແລ້ວ ດັ່ງນັ້ນ ຈຶ່ງເຫັນຄວນຕັດສິນລັບຫຼັງພວກເຂົາ.

ເຫັນຕາມມາດຕາ 36 ແລະ 39 ຂອງກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ, ມາດຕາ 5 ໃໝ່, 7, 9 ແລະ 12 ຂອງກົດໝາຍວ່າດ້ວຍຄ່າທຳນຽມສານ, , ມາດຕາ 55, 56, 57, 58 63, 66 ແລະ 67 ຂອງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ.

ດ້ວຍເຫດນີ້

ຈຶ່ງໄດ້ຕັດສິນຕໍ່ໜ້າປະຊາຊົນໃນສະຖານແພ່ງເປັນຂັ້ນຕົ້ນໂດຍລັບຫຼັງໂຈດ ແລະຈຳເລີຍ ບອກວ່າ ຄຳຮ້ອງຟ້ອງຂອງໂຈດ ແລະຄຳຟ້ອງແຍ່ງຂອງຈຳເລີຍ ມີເຫດຜົນ

- ໃຫ້ນາງແສງເພັດ (ຈຳເລີຍ) ໃຊ້ແທນເງິນຄ່າຊົດໃຊ້ໃຫ້ແກ່ທ້າວໄຊຊະນະ (ໂຈດ) ເປັນເງິນຈຳນວນ 7.888,70 ໂດລາ (ເຈັດພັນແປດຮ້ອຍແປດສິບແປດຈຸດເຈັດສິບໂດລາ)
- ໃຫ້ທ້າວໄຊຊະນະ (ໂຈດ) ນຳເອົາລົດຈັກໝາຍເລກທະບຽນ ວສກ 0451 ເລກຈັກ 04740 ເລກຖັງ 970201010 ຍີ່ຫໍ້ລານຈະເລີນ, ກະບະຊ່ວງຍາວ 2 ປະຕູ, ສີຟ້າ ລົງມາປາກເຊ ແລ້ວມອບໃຫ້ເປັນກຳມະສິດແກ່ນາງແສງເພັດ (ຈຳເລີຍ)
- ໃຫ້ນາງແສງເພັດ (ຈຳເລີຍ) ເສຍອາກອນຂອງລັດຈຳນວນ 100.000 ກີບ (ໜຶ່ງຮ້ອຍພັນກີບ).
- ໃຫ້ນາງແສງເພັດ (ຈຳເລີຍ) ທົດແທນເງິນວາງສານຈຳນວນ 2.500 ກີບ (ສອງພັນຫ້າຮ້ອຍກີບ) ຄືນໃຫ້ແກ່ໂຈດ.
- ໃຫ້ທ້າວໄຊຊະນະ (ໂຈດ) ເສຍອາກອນຂອງລັດຈຳນວນ 100.000 ກີບ (ໜຶ່ງຮ້ອຍພັນກີບ)
- ໃຫ້ໂຈດ ແລະຈຳເລີຍຮັບຜິດຊອບເສຍຄ່າສິ້ນເປືອງເອກະສານຜູ້ລະເຄິ່ງຈຳນວນ 8.000 ກີບ (ແປດພັນກີບ) ຖືກຜູ້ລະ 4.000 ກີບ (ສີ່ພັນກີບ)
- ໃຫ້ໂຈດ ແລະຈຳເລີຍຮັບຜິດຊອບເສຍຄ່າສິ້ນເປືອງຕ່າງໆໃນເວລາປະຕິບັດຄຳຕັດສິນຂອງສານຕາມການໃຊ້ຈ່າຍຕົວຈິງໃນຕໍ່ໜ້າ.

ໄດ້ບອກໂຈດ ແລະຈຳເລີຍຊາບແລ້ວວ່າຖ້າຝ່າຍໃດບໍ່ພໍໃຈມີສິດຂໍລົບລ້າງ ຫຼືຄັດຄ້ານຄຳຕັດສິນສະບັບນີ້ໄດ້ພາຍໃນກຳນົດ 20 ວັນ ນັບແຕ່ວັນໄດ້ຮັບຊາບຄຳຕັດສິນສະບັບນີ້ເປັນຕົ້ນໄປ.

ປະທານຄະນະສານ　　　　　　　　　　ຈ່າສານ

ມະນີໄຊ ພົງສະຫວັດ